ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ປັບປຸງການຈັດຕັ້ງໂຮງຮຽນອະນຸບານ ທຫລ



ໃນວັນທີ 29 ກໍລະກົດ 2019, ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປະກາດການແຕ່ງຕັ້ງ ຮອງຜູ້ອຳນວຍການໂຮງຮຽນອະນຸບານ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ເຜັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ທ່ານ ສາຍສະໝອນ ກິບເກສອນ ຮອງຫົວໜ້າຫ້ອງການ ທຫລ (ຜູ້ຊີ້ນຳໂຮງຮຽນອະນຸບານ ທຫລ) ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີທ່ານຮອງຜູ້ອຳນວຍການໂຮງຮຽນອະນຸບານ ທຫລ ໄດ້ຜ່ານບົດລາຍງານການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ. ຈາກນັ້ນ, ຜູ້ຕາງໜ້າຈາກກົມຈັດຕັ້ງແລະພະນັກງານ ໄດ້ຜ່ານຂໍ້ຕົກລົງວ່າດ້ວຍການຍົກຍ້າຍພະນັກງານໄປຮັບໜ້າທີ່ໃໝ່ ໂດຍໄດ້ຍົກຍ້າຍທ່ານນາງ ນິງຄານ ສໍຍະວົງ ຮອງຫົວໜ້າພະແນກນະໂຍບາຍ, ກົມຈັດຕັ້ງແລະພະນັກງານ ມາເປັນຮອງຜູ້ອຳນວຍການໂຮງຮຽນອະນຸບານ ທຫລ ແລະ ໃນໂອກາດດັ່ງກ່າວນີ້ ທ່ານຫົວໜ້າຫ້ອງການ ທຫລ ກໍ່ໄດ້ໃຫ້ກຽດໂອ້ລົມມີຄຳເຫັນ ໂດຍຮຽກຮ້ອງໃຫ້ພະນັກງານໂຮງຮຽນອະນຸບານ ທຫລ ຈົ່ງຍົກສູງວຽກງານການເມືອງແນວຄິດ, ຄຸນສົມບັດສິນທຳປະຕິວັດ ແລະ ເອົາໃຈໃສ່ບຸກບືນພັດທະນາຄຸນນະພາບຂອງຄູ ແລະ ແມ່ລ້ຽງຂອງໂຮງຮຽນອະນຸບານ ທຫລ ພ້ອມທັງປັບປຸງລະບຽບການພາຍໃນ ແລະ ແບບແຜນການນຳພາ-ຄຸ້ມຄອງ, ແບບແຜນການປະຕິບັດວຽກງານໃຫ້ດີຂຶ້ນກວ່າເກົ່າ. ພ້ອມດຽວກັນນີ້, ທ່ານຮອງຜູ້ອຳນວຍການໂຮງຮຽນອະນຸບານ ທຫລ ຄົນໃໝ່ໄດ້ຂຶ້ນກ່າວຮັບຄຳໂອ້ລົມ ແລະ ຂໍປະຕິຍານຕົນວ່າຈະຕັ້ງໜ້າປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍຢ່າງສຸດຄວາມສາມາດ.

**#ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ